ບົດຮຽນຈາກການຈັດຕັ້ງກຸ່ມລ້ຽງງົວ

ຮຽບຮຽງໂດຍ: ຂັນຄຳ ອ້ວນອຸດົມ, ສູນຂໍ້ມູນຂ່າວສານ

ການຈັດຕັ້ງກຸ່ມລ້ຽງສັດ ທີ່ເມືອງໂພນໄຊ ແຂວງຫຼວງພະບາງ ແລະ ເມືອງນາໝໍ້ ແຂວງອຸດົມໄຊ ໄດ້ເລີ່ມແຕ່ປີ 2004 ເປັນຕົ້ນມາ ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດເຫັນໄດ້ຄວາມແຕກຕ່າງຜົນສຳເລັດຂອງແຕ່ລະກຸ່ມຢູ່ສອງສະຖານທີ່ ຄື: ກຸ່ມ ບ້ານໄຊສຳພັນ ເມືອງນາໝໍ້ ບໍ່ສາມາດສືບຕໍ່ວຽກດ້ວຍຕົນເອງໄດ້ ແລະ ໃນທາງກົງກັນຂ້າມ ກຸ່ມບ້ານໂພນທອງ ເມືອງໂພນໄຊ ພັດມີການຂະຫຍາຍຕົວດີຂຶ້ນ.

ສຳລັບການຈັດຕັ້ງ-ການຄຸ້ມຄອງກຸ່ມຍາງພະລາ ທີ່ບ້ານຫາດຍາວ ເມືອງ ແລະ ແຂວງຫຼວງນ້ຳທາ ໄດ້ມີການພັດທະນາຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງໄດ້ . ກໍລະນີສຶກສາທັງສອງລະບົບນີ້ສາມາດຍົກໃຫ້ເຫັນໄດ້ບົດຮຽນ ແຕ່ລະດ້ານ ຄື: ຈຸດປະສົງ, ຄວາມຮັບຜິດຊອບ, ການພັດທະນາຄວາມສາມາດ ແລະ ການສະໜັບສະໜູນແບບຄົບວົງຈອນ ເພື່ອເປັນບົດຮຽນໃນການປັບປຸງຂະບວນການຈັດຕັ້ງກຸ່ມໃນຕໍ່ໜ້າ.

ຈຸດປະສົງ

ຈຸດປະສົງໃນການສະເໜີນີ້ ແມ່ນເພື່ອສັງລວມໃຫ້ເຫັນ ບາງບົດຮຽນ ທີ່ໄດ້ຈາກການດຳເນີນ ການຈັດຕັ້ງປະຕິບັດ,

ຝູງງົວ ຂອງກຸ່ມລ້ຽງສັດ ບ້ານໂພນທອງ ເມືອງໂພນໄຊ

ສວນຫຍ້າລ້ຽງສັດ ຂອງກຸ່ມລ້ຽງງົວ ບ້ານໂພນທອງ ເມືອງໂພນໄຊ

ການສະໜັບສະໜູນ ໃນການຈັດຕັ້ງກຸ່ມຜ່ານມາ ແລະ ເພື່ອເປັນທິດທາງໃນການແກ້ໄຂບັນຫາໃນຕໍ່ໜ້າ.

ກໍລະນີສຶກສາ

ສັງລວມເອົາບົດຮຽນ ແລະ ຂໍ້ມູນຈາກກິດຈະກຳທັງໃນ ແລະ ນອກໂຄງການເຊັ່ນ:

1. ໃນໂຄງການແມ່ນການຈັດຕັ້ງກຸ່ມລ້ຽງສັດທີ່ ເມືອງໂພນໄຊ ແລະ ເມືອງນາໝໍ້,ທີ່ໄດ້ດຳເນີນການຈັດຕັ້ງປະຕິບັດໂດຍເລັ່ງໃສ່ການຂະຫຍາຍຝູງສັດທີ່ມີການປູກຫຍ້າເປັນອາຫານສັດ.
2. ນອກໂຄງການແມ່ນລະບົບການຄຸ້ມຄອງກຸ່ມຢາງພາລາ ທີ່ບ້ານຫາດຍາວ, ເມືອງ ແລະ ແຂວງຫຼວງນ້ຳທາ ຊຶ່ງ ທາງກຸ່ມໄດ້ເລັ່ງໃສ່ການວາງແຜນການຜະລິດ ແລະ ການຕະຫຼາດ.

ຜົນໄດ້ຮັບ

ການຈັດຕັ້ງກຸ່ມມີຫຼາຍຈຸດປະສົງແຕ່ໂດຍສ່ວນໃຫຍ່ແລ້ວແມ່ນ ເພື່ອຊຸກຍູ້ການຜະລິດຊຶ່ງຍັງບໍ່ສາມາດເຮັດໃຫ້ຊີວິດການເປັນຢູ່ຂອງສະມາຊິກດີຂຶ້ນໄດ້ເທົ່າທີ່ຄວນເນື່ອງຈາກว່າ ຈຸດປະສົງຂອງກຸ່ມຍັງບໍ່ກົງກັບບັນຫາທີ່ເກີດຂຶ້ນໃນຂົງເຂດ ແລະ ກິດຈະກຳຂອງກຸ່ມຍັງບໍ່ກວມລວມຕັ້ງແຕ່ການຜະລິດ , ການເຂົ້າເຖິງການບໍລິການໄປຈົນເຖິງການຕະຫຼາດ.

ບົດບາດຂອງສະມາຊິກພາຍໃນກຸ່ມ ແມ່ນຍັງແຄບຢູ່ເພາະຜູ້ຈັດຕັ້ງກຸ່ມ ຫຼື ຜູ້ກຳນົດກົດລະບຽບໂດຍສ່ວນໃຫຍ່ແມ່ນ ຍັງຈຳກັດຂອບເຂດສິດຂອງສະມາຊິກໃນການມີສ່ວນຮ່ວມໃນ ການບໍລິຫານ,ຈັດການ ແລະ ຕັດສິນໃຈ ຊຶ່ງໃນກຸ່ມ ໃດທີ່ມີຂັ້ນຕອນຂອງການຄຸ້ມຄອງທີ່ໃຫ້ໂອກາດໃນການນຳໃຊ້ສິດຂອງສະມາຊິກເຮັດໃຫ້ກຸ່ມປະສົບຜົນສຳເລັດໄດ້ດີ ກວ່າ.

ກຸ່ມຕ້ອງມີການປັບຕົວເນື່ອງຈາກສະພາບແວດລ້ອມທັງພາຍໃນ ແລະ ພາຍນອກມີການປ່ຽນແປງຢູ່ຕະຫຼອດເວລາ. ດັ່ງນັ້ນ, ກຸ່ມທີ່ສາມາດປັບຕົວໄດ້ຕາມສະພາບຂອງຕະຫຼາດ, ສິ່ງແວດລ້ອມ, ເທັກໂນ�โลยี... ຈະເຮັດໃຫ້ກຸ່ມຍືນຍົງ.

ກຸ່ມຍັງຕ້ອງການ ການສະໜັບສະໜູນ ໃນຫຼາຍດ້ານບໍ່ວ່າຈະເປັນດ້ານການບໍລິຫານ , ຈັດການ, ການຄຸ້ມຄອງພາຍໃນກຸ່ມ ແລະ ອື່ນໆ ເພື່ອໃຫ້ກຸ່ມມີກົດຈະກຳທີ່ກວາມລວມ ຕັ້ງ ແຕ່ການຜະລິດ, ການເຂົ້າເຖິງການບໍລິການ ໄປຈົນເຖິງກຸ່ມເປັນຜູ້ຂາຍເອງ ຊຶ່ງໃນນີ້ຕ້ອງໄດ້ມີຫຼາຍພາກສ່ວນເຂົ້າມາໃຫ້ການຊ່ວຍເຫຼືອເພື່ອໃຫ້ກຸ່ມສາມາດເພິ່ງພາ ແລະ ກຸ້ມຕົນເອງໄດ້.

ຂໍ້ສະເໜີແນະນຳ

1. ກ່ອນຈັດຕັ້ງກຸ່ມ ຕ້ອງມີການສຶກສາບັນຫາ ແລະ ຄວາມເປັນໄປໄດ້ເພື່ອຄວາມຍືນຍົງຂອງກຸ່ມ (ການຜະລິດ, ແຮງງານ, ການຕະຫຼາດ ແລະ ການເຂົ້າເຖິງຂໍ້ມູນ ແລະ ການບໍລິການ).
2. ກຳນົດສິດຂອບເຂດ ແລະ ຄວາມຮັບຜິດຊອບຂອງສະມາຊິກໃຫ້ລະອຽດ,ທຳຄວາມເຈົ້າໃຈ ,ມີຄວາມເປັນ ເອກະພາບ ແລະ ສ້າງຄວາມສາມາດ.
3. ເປັນເວທີໃນການປຶກສາຫາລື, ແລກປ່ຽນບົດຮຽນ ແລະ ແກ້ໄຂບັນຫາຮ່ວມກັນພ້ອມທັງມີວິທີການປັບປຸງກົນໄກຕ່າງໆໃນກຸ່ມ.
4. ຫຼັງຈັດຕັ້ງກຸ່ມ ບັນດາອົງກອນຕ່າງໆ ຫຼື ຜູ້ໃຫ້ທຶນ ຕ້ອງ ໃຫ້ການສະໜັບສະໜູນຄົບວົງຈອນ (ການຄຸ້ມຄອງ, ຂໍ້ມູນຂ່າວສານ ທາງດ້ານເຕັກນິກ ແລະ ການຕະຫຼາດ, ການພັດທະນາຄວາມສາມາດ).